ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 32 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 21 ມັງກອນ 2021

## ໜັງສືແຈ້ງການ

**ເຖິງ** : ທ່ານຜູ້ປົກຄອງເດັກນັກຮຽນ ທີ່ນັບຖື.

**ເລື່ອງ**: ການປ້ອງກັນໂຄວິດ-19 ຢູ່ໂຮງຮຽນອະນຸບານ ທຫລ.

- ອີງຕາມມາດຖານ ແລະ ເງື່ອນໄຂສຳລັບຜູ້ທີ່ຈະຝາກເດັກເຂົ້າໂຮງຮຽນອະນຸບານ ທຫລ ເລກທີ 121/ຫກ, ລົງວັນທີ 24 ມິຖຸນາ 2020;
- ອີງຕາມການແຜ່ລະບາດຂອງໂຄວິດ-19 ໃນປະຈຸບັນ.

ຫ້ອງການທະນາຄານແຫ່ງ ສປປ ລາວ (ໂຮງຮຽນອະນຸບານທະນາຄານແຫ່ງ ສປປ ລາວ) ມີຈຸດປະສົງແຈ້ງມາຍັງທ່ານຜູ້ປົກຄອງເດັກນັກຮຽນຊາບທົ່ວເຖິງກັນ ໂດຍມີລາຍລະອຽດຄືດັ່ງນີ້:

1. ໃຫ້ຜູ້ປົກຄອງມາສົ່ງ ແລະ ຮັບເດັກນັກຮຽນຕາມໂມງເວລາທີ່ໂຮງຮຽນກຳນົດຢ່າງເຂັ້ມງວດ ຄື: ຕອນເຊົ້າເລີ່ມແຕ່ເວລາ 7:30-08:30 ໂມງ ແລະ ຕອນແລງ 16:00-16:30 ໂມງ;
2. ການມາສົ່ງ-ມາຮັບເດັກນັກຮຽນແຕ່ລະວັນຜູ້ປົກຄອງຄວນໃສ່ຜ້າອັດປາກທຸກຄັ້ງ ແລະ ຕ້ອງໄດ້ຜ່ານການກວດວັດແທກອຸນຫະພູມຂອງຮ່າງກາຍ ແລະ ຂ້າເຊື້ອທຸກຄັ້ງໃນເວລາເຂົ້າມາໂຮງຮຽນ; ຖ້າອຸນຫະພູມຮ່າງກາຍຫາກເກີນ 37 ອົງສາແມ່ນຈະຕ້ອງໄດ້ກັບບ້ານທັນທີ;
3. ກໍລະນີເດັກນັກຮຽນເປັນຫວັດ-ໄອ, ເປັນໄຂ້-ເຈັບຄໍ ແມ່ນໃຫ້ນັກຮຽນພັກຜ່ອນຢູ່ບ້ານເພື່ອປິ່ນປົວໃຫ້ຫາຍດີເປັນປົກກະຕິຈຶ່ງມາໂຮງຮຽນ.

ດັ່ງນັ້ນ, ຈຶ່ງອອກແຈ້ງການສະບັບນີ້ມາຍັງທ່ານຜູ້ປົກຄອງເດັກນັກຮຽນທຸກທ່ານຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດດ້ວຍ.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສາຍສະໝອນ ກິບເກສອນ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**